ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

************

ສຳນັກງານປົກຄອງເມືອງຍົມມະລາດ

ເລກທີ 213 /ຈມ.ຍລ

ຍົມມະລາດ, ວັນທີ 29-ກໍລະກົດ-2014

# ຂໍ້ຕົກລົງ

## ຂອງທ່ານເຈົ້າເມືອງໆ ຍົມມະລາດ

## ວ່າດ້ວຍການແຕ່ງຕັ້ງຄະນະປະສານງານຂອງເມືອງສົມທົບກັບ ບໍລິສັດ NTPC ກອງເລຂາຍົກຍ້າຍ, ຈັດສັນ

- ອີງຕາມ: ສັນຍາສຳປະທານລະຫວ່າງ ລັດຖະບານແຫ່ງ ສປປລາວ ແລະ ບໍລິສັດ ໄຟຟ້ານໍ້າເທີນ2 ລົງວັນທີ 3 ຕຸລາ 2002.
- ອີງຕາມ: ຈົດໝາຍອະນຸມັດຈາກ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ກ່ຽວກັບຂໍ້ຕົກລົງການນຳໃຊ້ດິນໃນຊ່ວງສັນຍາສຳປະທານ ເລກທີ 0304, MEM- EPD, ລົງວັນທີ 16 ມີນາ 2011.
- ອີງຕາມ: ໜັງສືອະນຸມັດ ການກໍ່ສ້າງຝາຍນໍ້າລົ້ນຈາກກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ DEB 0780, ລົງວັນທີ 02 ມິຖຸນາ 2014 ແລະ ເລກທີ DEB 0740, ລົງວັນທີ 23 ພຶດສະພາ 2014.

## ເຈົ້າເມືອງໆຍົມມະລາດ ຕົກລົງ

**ມາດຕາ 01:** ແຕ່ງຕັ້ງຄະນະກຳມະການຜູ້ປະສານງານຂັ້ນເມືອງ ປະກອບດ້ວຍບັນດາທ່ານລຸ່ມນີ້:

| | | |
|---|---|---|
| 1. ທ່ານ ຄູນສີ ແສງດາລາ | ຫົວໜ້າຫ້ອງວ່າການປົກຄອງເມືອງ | ເປັນຫົວໜ້າ |
| 2. ທ່ານ ນ. ອຸບົນລັດ ບົວຈູມ | ຮອງປະທານສະຫະພັນແມ່ຍິງເມືອງ | ເປັນຮອງ |
| 3. ທ່ານ ນ. ມຸດສີ ຄຳພາແສງ | ພະນັກງານຫ້ອງການກະສິກຳ-ປ່າໄມ້ເມືອງ | ເປັນຄະນະ |
| 4. ທ່ານ ນ້ອຍມະນີ ແສງທອງດີ | ພະນັກງານຫ້ອງການຍຸຕິທຳເມືອງ | ເປັນຄະນະ |
| 5. ທ່ານ ສອນໃຊ ສີວິໄລ | ພະນັກງານຫ້ອງການຊັບ(ສິ່ງແວດລ້ອມ) | ເປັນຄະນະ |
| 6. ທ່ານ ພູທອງ ພົມສີແພງ | ພະນັກງານຫ້ອງການຊັບ(ທີ່ດິນ) | ເປັນຄະນະ |
| 7. ທ່ານ ຊາດປະຊາ ຈັນວັນເພັງ | ພະນັກງານຫ້ອງການພາຍໃນເມືອງ | ເປັນຄະນະ |

**ມາດຕາ 02: ວ່າດ້ວຍສິດ ແລະ ໜ້າທີ່.**

- ຈັດຕັ້ງກອງປະຊຸມຮ່ວມປຶກສາຫາລືກັບຄະນະກຳມະການຂັ້ນເມືອງ ແລະ ພ້ອມກັນວາງແຜນຂັ້ນຕອນການຈັດຕັ້ງປະຕິບັດແບບແຜນວິທີເຮັດວຽກໃນແຕ່ລະໄລຍະ.
- ຈັດກອງປະຊຸມສະຫຼູບຖອດຖອນບົດຮຽນ-ແລກປ່ຽນບົດຮຽນ ລະຫວ່າງໂຄງການຄູ່ຮ່ວມງານເປັນປະຈຳ 1 ເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳ 1 ປີ. ແລ້ວລາຍງານຕໍ່ຂັ້ນເທິງເປັນປົກກະຕິ.
- ຈັດຕັ້ງແບ່ງແຜນງານ, ແຜນຄົນ, ແຜນງົບປະມານ ໃຫ້ສອດຄ່ອງກັບ ສະພາບການໜ້າວຽກຕົວຈິງ.
- ການຈັດຕັ້ງປະຕິບັດນັ້ນ ຖ້າພົບກັບບັນຫາຂໍ້ຫຍຸ້ງຍາກ ແມ່ນຄົ້ນຄວ້າປຶກສາຫາລື ແລ້ວນຳສະເໜີຕໍ່ຂັ້ນເທິງ ເພື່ອຂໍທິດຊີ້ນຳ ແກ້ໄຂບັນຫາໃຫ້ຖ່ວງທັນກັບສະພາບການຕົວຈິງ.

**ມາດຕາ 03:** ມອບໃຫ້ພາກສ່ວນຕ່າງໆ ແລະ ບັນດາທ່ານຜູ້ທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບໝາກຜົນເປັນຢ່າງດີ.

**ມາດຕາ 04:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າເມືອງໆ ຍົມມະລາດ

ມະນີວົງ ຈັນທະວົງ